ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2313

ກະຊວງສາທາລະນະສຸກ ເລກທີ /ສທ

ນະຄອນຫຼວງວຽງຈັນ, ວັນທີ 13 OCT 2017

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງແລະການເຄື່ອນໄຫວຂອງຫ້ອງກວດພະຍາດເອກະຊົນ

- ອີງຕາມ ກົດໝາຍ ວ່າດ້ວຍການປິ່ນປົວ(ສະບັບປັບປຸງ) ເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງ ກະຊວງສາທາລະນະສຸກ ເລກທີ 096/ນຍ, ລົງວັນທີ 09 ມີນາ 2017.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມປິ່ນປົວ ກະຊວງສາທາລະນະສຸກ.

### ລັດຖະມົນຕີ ຕົກລົງ :

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ:**

ຂໍ້ຕົກລົງສະບັບນີ້ກຳນົດ ລະບຽບການ, ມາດຕະຖານ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາ ຫ້ອງກວດພະຍາດເອກະຊົນ ແນ່ໃສ່ເພື່ອປະຕິບັດ ກົດໝາຍວ່າດ້ວຍການປິ່ນປົວ, ເພື່ອເປັນເຄື່ອງມືໃຫ້ແກ່ການຄຸ້ມຄອງຫ້ອງກວດພະຍາດເອກະຊົນ ໃຫ້ປະຕິບັດ ຕາມ ເງື່ອນໄຂ ແລະ ມາດຕະຖານ ທີ່ ກະຊວງ ສາທາລະນະສຸກ ວາງອອກ, ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກທີ່ວ່າ ລັດ ແລະ ເອກະຊົນ ພ້ອມກັນເຮັດ ແນ່ໃສ່ຂະຫຍາຍຕາໜ່າງການບໍລິການປິ່ນປົວ ເພື່ອຮັກສາສຸຂະພາບຂອງປະຊາຊົນ ໃຫ້ນັບມື້ນັບກວ້າງຂວາງ ແລະ ດີຂຶ້ນ.

**ມາດຕາ 2. ລະດັບຄາດໝາຍ:**

ເຮັດໃຫ້ຫ້ອງກວດພະຍາດເອກະຊົນ ບັນລຸຕາມ ເງື່ອນໄຂ ມາດຕະຖານ ຫຼັກການ ຂອງ ກົດໝາຍວ່າດ້ວຍການປິ່ນປົວ ວາງອອກ ເພື່ອຮັບປະກັນຄຸນນະພາບ ຂອງ ການກວດພະຍາດ, ການບົ່ງມະຕິ, ໃຫ້ການປິ່ນປົວ, ຟື້ນຟູຊີບ-ຟື້ນຟູໜ້າທີ່ການ ລວມທັງ ການກັນພະຍາດ, ສົ່ງເສີມສຸຂະພາບ, ສຸຂະພາບຈະເລີນພັນ ແລະ ຮັບປະກັນ ຄວາມປອດໄພໃຫ້ແກ່ຄົນ ເຈັບ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

2313

ກະຊວງສາທາລະນະສຸກ

ເລກທີ 2313 /ສທ

ນະຄອນຫຼວງວຽງຈັນ, ວັນທີ 13 OCT 201

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງແລະການເຄື່ອນໄຫວຂອງຫ້ອງກວດພະຍາດເອກະຊົນ

- ອີງຕາມ ກົດໝາຍ ວ່າດ້ວຍການປິ່ນປົວ(ສະບັບປັບປຸງ) ເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງ ກະຊວງສາທາລະນະສຸກ ເລກທີ 096/ນຍ, ລົງວັນທີ 09 ມີນາ 2017.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມປິ່ນປົວ ກະຊວງສາທາລະນະສຸກ.

## ລັດຖະມົນຕີ ຕົກລົງ :

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ:**

ຂໍ້ຕົກລົງສະບັບນີ້ກຳນົດ ລະບຽບການ, ມາດຕະຖານ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາ ຫ້ອງກວດພະຍາດເອກະຊົນ ແນ່ໃສ່ເພື່ອປະຕິບັດ ກົດໝາຍວ່າດ້ວຍການປິ່ນປົວ, ເພື່ອເປັນເຄື່ອງມືໃຫ້ແກ່ການຄຸ້ມຄອງຫ້ອງກວດພະຍາດເອກະຊົນ ໃຫ້ປະຕິບັດ ຕາມ ເງື່ອນໄຂ ແລະ ມາດຕະຖານ ທີ່ ກະຊວງ ສາທາລະນະສຸກ ວາງອອກ, ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກທີ່ວ່າ ລັດ ແລະ ເອກະຊົນ ພ້ອມກັນເຮັດ ແນ່ໃສ່ຂະຫຍາຍຕາໜ່າງການບໍລິການປິ່ນປົວ ເພື່ອຮັກສາສຸຂະພາບຂອງປະຊາຊົນ ໃຫ້ນັບມື້ນັບກ້ວາງ ຂວາງ ແລະ ດີຂຶ້ນ.

**ມາດຕາ 2. ລະດັບຄາດໝາຍ:**

ເຮັດໃຫ້ຫ້ອງກວດພະຍາດເອກະຊົນ ບັນລຸຕາມ ເງື່ອນໄຂ ມາດຕະຖານ ຫຼັກການ ຂອງ ກົດໝາຍວ່າດ້ວຍການປິ່ນປົວ ວາງອອກ ເພື່ອຮັບປະກັນຄຸນນະພາບ ຂອງ ການກວດພະຍາດ, ການບົ່ງມະຕິ, ໃຫ້ການປິ່ນປົວ, ຟື້ນຟູຊີບ-ຟື້ນຟູໜ້າທີ່ ການ ລວມທັງ ການກັນພະຍາດ, ສົ່ງເສີມສຸຂະພາບ, ສຸຂະພາບຈະເລີນພັນ ແລະ ຮັບປະກັນ ຄວາມປອດໄພໃຫ້ແກ່ ຄົນ ເຈັບ.

**ມາດຕາ 3. ຂອບເຂດການນຳໃຊ້:**
ຂໍ້ຕົກລົງສະບັບນີ້ມີຂອບເຂດການນຳໃຊ້ ຕໍ່ ຫ້ອງກວດພະຍາດເອກະຊົນ ທຸກປະເພດ, ທຸກລັກສະນະ ແລະ ທຸກຂັ້ນ ໃນຂອບເຂດທົ່ວປະເທດ.

**ມາດຕາ 4. ຄວາມໝາຍຂອງຄຳສັບ:**
ຫ້ອງກວດພະຍາດເອກະຊົນ ໝາຍເຖິງສະຖານທີ່ບໍລິການປິ່ນປົວ ຂະໜາດນ້ອຍ ຂອງ ເອກະຊົນ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງ ສາທາລະນະສຸກ, ເຊິ່ງປະກອບມີ ຜູ້ປະກອບວິຊາຊີບປິ່ນປົວ, ອຸປະກອນການແພດ ແລະ ຫ້ອງກວດ ພະຍາດ ບໍ່ມີຕຽງສຳລັບຄົນເຈັບນອນພັກປິ່ນປົວແຮມຄືນ.

## ໝວດທີ 2
## ສະຖານທີ່ຕັ້ງ ແລະ ມາດຖານເງື່ອນໄຂຂອງຫ້ອງກວດພະຍາດເອກະຊົນ

**ມາດຕາ 5. ສະຖານທີ່ຕັ້ງ ແລະ ມາດຖານ ເງື່ອນໄຂ ຂອງ ຫ້ອງກວດພະຍາດເອກະຊົນ:**
ຫ້ອງກວດພະຍາດເອກະຊົນ ຕ້ອງຕັ້ງຢູ່ບ່ອນທີ່ເໝາະສົມ, ສະພາບແວດລ້ອມທີ່ດີຖືກຕ້ອງຕາມຫຼັກການ ແລະ ປະຊາຊົນສາມາດເຂົ້າໄປຮັບບໍລິການໄດ້ສະດວກ, ຫ້ອງກວດພະຍາດເອກະຊົນແຕ່ລະແຫ່ງໜຶ່ງ ຕ້ອງປະກອບດ້ວຍ:

1. ຫ້ອງກວດພະຍາດ ຂັ້ນ 1 :
   1) ຫ້ອງລໍຖ້າ: ບໍ່ໃຫ້ຫຼຸດ 12 ຕະລາງແມັດ.
   2) ຫ້ອງກວດ: ບໍ່ໃຫ້ຫຼຸດ 09 ຕະລາງແມັດ.
   3) ຫ້ອງປະຕິບັດການດ້ານການແພດ ແລະ ພະຍາບານ ທີ່ເໝາະສົມ.
   4) ຫ້ອງສະໜັບສະໜູນດ້ານການແພດອື່ນໆໃຫ້ຖືກຕ້ອງ ຕາມ ມາດຕະຖານດ້ານເຕັກນິກສະເພາະດ້ານ.
   5) ອຸປະກອນການແພດ ທັນສະໄໝ 03 ເຄື່ອງ ຂຶ້ນໄປ
   6) ມີຫ້ອງນ້ຳທີ່ຖືກສຸຂະລັກສະນະ.
   7) ມີລະບົບກຳຈັດຂີ້ເຫຍື້ອ ແລະ ນ້ຳຕິດເຊື້ອ ທີ່ເໝາະສົມ ຖືກຕ້ອງຕາມຫຼັກການ.
2. ຫ້ອງກວດພະຍາດ ຂັ້ນ 2 :
   1) ຫ້ອງລໍຖ້າ: ບໍ່ໃຫ້ຫຼຸດ 12 ຕະລາງແມັດ.
   2) ຫ້ອງກວດ: ບໍ່ໃຫ້ຫຼຸດ 09 ຕະລາງແມັດ.
   3) ຫ້ອງປະຕິບັດການດ້ານການແພດ ແລະ ພະຍາບານ ທີ່ເໝາະສົມ.
   4) ອຸປະກອນການແພດ ທັນສະໄໝ 02 ເຄື່ອງ ລົງມາ
   5) ມີຫ້ອງນ້ຳທີ່ຖືກສຸຂະລັກສະນະ.
   6) ມີລະບົບກຳຈັດຂີ້ເຫຍື້ອ ແລະ ນ້ຳຕິດເຊື້ອ ທີ່ເໝາະສົມ ຖືກຕ້ອງຕາມຫຼັກການ.
3. ຫ້ອງກວດພະຍາດ ຂັ້ນ 3 :
   1) ຫ້ອງລໍຖ້າ: ບໍ່ໃຫ້ຫຼຸດ 12 ຕະລາງແມັດ.
   2) ຫ້ອງກວດ: ບໍ່ໃຫ້ຫຼຸດ 09 ຕະລາງແມັດ.
   3) ອຸປະກອນການແພດທີ່ຈຳເປັນຂັ້ນພື້ນຖານ.
   4) ມີຫ້ອງນ້ຳທີ່ຖືກສຸຂະລັກສະນະ.
   5) ມີລະບົບກຳຈັດຂີ້ເຫຍື້ອ ແລະ ນ້ຳຕິດເຊື້ອ ທີ່ເໝາະສົມ ຖືກຕ້ອງຕາມຫຼັກການ.

**ມາດຕາ 6. ການຕິດປ້າຍຫ້ອງກວດພະຍາດ:**

ຫ້ອງກວດພະຍາດຕ້ອງມີປ້າຍບອກແຈ້ງ ປະເພດ, ລັກສະນະ, ຂັ້ນ ແລະ ຊື່ຂອງຜູ້ປະກອບວິຊາຊີບປິ່ນປົວ ທີ່ເປັນເຈົ້າຂອງຫ້ອງກວດພະຍາດ; ລາຍລະອຽດຂອງປ້າຍຫ້ອງກວດພະຍາດ ມີດັ່ງນີ້:

1. <u>ຂະໜາດຂອງປ້າຍ:</u>
   - ກ້ວາງ 80 ຊຕມ
   - ຍາວ: 180 ຊຕມ.
2. <u>ສີຂອງປ້າຍ:</u>
   - ສີຂາວ: ສີພື້ນຂອງປ້າຍ.
   - ສີຟ້າແກ່: ຂອບຂອງປ້າຍ, ຕົວອັກສອນ ຊື່ທ່ານໝໍ, ວິຊາຊີບປິ່ນປົວ.
   - ສີຂຽວແກ່: ສີຕົວອັກສອນ: ກະຊວງສາທາລະນະສຸກ, ເລກທີ: / ສທ. ຫ້ອງກວດພະຍາດເອກະຊົນ, PRIVATE CLINIC, ບ້ານ, ເມືອງ, ແຂວງ, ຖະໜົນ, ໂທລະສັບ, ແຟັກ ແລະ ກາຫ້ອງກວດພະຍາດ.
   - ສີແດງ: ຕົວອັກສອນ: ປະເພດ, ລັກສະນະ, ຂັ້ນ.




**ມາດຕາ 7. ການຕິດໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ:**

ຫ້ອງກວດພະຍາດເອກະຊົນ ທຸກປະເພດ, ທຸກລັກສະນະ ແລະ ທຸກຂັ້ນ ຕ້ອງຕິດໃບອະນຸຍາດສ້າງຕັ້ງ ຫ້ອງກວດພະຍາດເອກະຊົນຂອງຕົນເອງ ແລະ ຂໍ້ແນະນຳຕ່າງໆຂອງກະຊວງສາທາລະນະສຸກ ໄວ້ບ່ອນທີ່ ເໝາະສົມ ເພື່ອສະດວກໃນການຕິດຕາມ ແລະ ກວດກາ.

**ມາດຕາ 8. ປະເພດ ຂອງ ຫ້ອງກວດພະຍາດເອກະຊົນ:**

ຫ້ອງກວດພະຍາດເອກະຊົນ ມີ **ສອງ** ປະເພດ:

1. ປະເພດ 24 ຊົ່ວໂມງ: ສາມາດເປີດບໍລິການ ປິ່ນປົວຄົນເຈັບໄດ້ຕະຫຼອດ 24 ຊົ່ວໂມງ.
2. ປະເພດ ນອກໂມງລັດຖະການ: ສາມາດເປີດບໍລິການປິ່ນປົວຄົນເຈັບໄດ້ເວລານອກໂມງລັດຖະການ ໝາຍຄວາມວ່າ ມີເວລາເປີດ ແລະ ປິດຈຳກັດ.

**ມາດຕາ 9. ລັກສະນະ ຂອງ ຫ້ອງກວດພະຍາດເອກະຊົນ:**

ຫ້ອງກວດພະຍາດເອກະຊົນມີ **<u>ສາມ</u>** ລັກສະນະ.

1. ລັກສະນະຂອງການບໍລິການປິ່ນປົວທົ່ວໄປ.
2. ລັກສະນະຂອງການບໍລິການປິ່ນປົວ ຂະແໜງສະເພາະວິຊາ.
3. ລັກສະນະຂອງການບໍລິການປິ່ນປົວດ້ວຍການແພດພື້ນເມືອງ ລວມທັງປັກເຂັມ, ຮົມຢາ ແລະນວດພື້ນເມືອງ ເພື່ອສຸຂະພາບ.

**ມາດຕາ 10. ຂັ້ນ ຂອງ ຫ້ອງກວດພະຍາດເອກະຊົນ:**

ຫ້ອງກວດພະຍາດເອກະຊົນມີ **<u>ສາມ</u>** ຂັ້ນ:

1. ຫ້ອງກວດພະຍາດ ຂັ້ນ 1 :
   ໝາຍເຖິງຫ້ອງກວດພະຍາດ ທີ່ມີຜູ້ປະກອບວິຊາຊີບປິ່ນປົວ ຂັ້ນຊ່ຽວຊານ ຂັ້ນ 1 ຂຶ້ນໄປ ແລະ ມີມາດຖານ ເງື່ອນໄຂ ຄົບຖ້ວນ ຕາມ ມາດຕາ 5 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້.
2. ຫ້ອງກວດພະຍາດ ຂັ້ນ 2 :
   ໝາຍເຖິງຫ້ອງກວດພະຍາດ ທີ່ມີຜູ້ປະກອບວິຊາຊີບປິ່ນປົວ ຂັ້ນປະລິນຍາຕີ ຂຶ້ນໄປ ແລະ ມີມາດຖານ ເງື່ອນໄຂ ຄົບຖ້ວນ ຕາມ ມາດຕາ 5 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້.
3. ຫ້ອງກວດພະຍາດ ຂັ້ນ 3 :
   ໝາຍເຖິງຫ້ອງກວດພະຍາດ ທີ່ມີຜູ້ປະກອບວິຊາຊີບປິ່ນປົວ ຂັ້ນປະລິນຍາຕີ ແລະ ມີມາດຖານ ເງື່ອນໄຂຄົບຖ້ວນ ຕາມ ມາດຕາ 5 ຂໍ້ 3 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 3

## ສິດ, ໜ້າທີ່ ແລະ ພັນທະ ຂອງຫ້ອງກວດພະຍາດເອກະຊົນ

**ມາດຕາ 11. ຂອບເຂດສິດຂອງຫ້ອງກວດພະຍາດເອກະຊົນ:**

1. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວພະຍາດແລະຟື້ນຟູໜ້າທີ່ການ ຕາມມາດຕະຖານວິຊາການ ທີ່ກະຊວງ ສາທາລະນະສຸກ ວາງອອກ ເຊັ່ນ: ກວດແລະບົ່ງມະຕິພະຍາດ, ອອກໃບສັ່ງປິ່ນປົວ, ຈ່າຍຢາ, ແນະນຳດ້ານການ ແພດ, ໃຫ້ການພະຍາບານ, ໃຫ້ຂໍ້ມູນຂ່າວສານແກ່ຄົນເຈັບ, ຮັກສາຄວາມລັບຂອງຄົນເຈັບ, ອອກໃບຢັ້ງຢືນການ ປິ່ນປົວ, ຮັບການຝຶກອົບຮົມ ແລະ ປະເມີນຜົນ.
2. ເກັບຄ່າບໍລິການນຳຄົນເຈັບທີ່ມາກວດ ແລະ ປິ່ນປົວພະຍາດ ຢ່າງສົມເຫດສົມຜົນ.
3. ໄປຕິດຕາມ ແລະ ປິ່ນປົວຄົນເຈັບ ຢູ່ກັບເຮືອນ ຖ້າຄົນເຈັບຮ້ອງຂໍ.
4. ໄດ້ຮັບການຝຶກອົບຮົມໃນວິຊາສະເພາະການແພດ ທີ່ທາງໂຮງໝໍແຂວງ, ພະແນກສາທາລະນະສຸກແຂວງ, ນະຄອນ ຫຼວງ, ຫ້ອງການສາທາລະນະສຸກເມືອງ ຈັດຂຶ້ນ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດ ທາງດ້ານການກວດ, ການ ບົ່ງມະຕິ ແລະ ການປິ່ນປົວພະຍາດ ໃຫ້ສູງຂຶ້ນ.
5. ສົ່ງຄົນເຈັບໄປສືບຕໍ່ການປິ່ນປົວ ຢູ່ ຫ້ອງກວດພະຍາດ ຫຼື ໂຮງໝໍອື່ນ ທີ່ມີຊ່ຽວຊານສະເພາະ ກ່ຽວກັບພະຍາດ ຂອງຄົນເຈັບ ພ້ອມດ້ວຍໃບນຳສົ່ງ ແລະ ບົດບັນທຶກການປິ່ນປົວ ຢູ່ ຫ້ອງກວດພະຍາດຂອງຕົນ.
6. ທຸກກໍລະນີສຸກເສີນກະທັນຫັນ ທີ່ເຫັນວ່າເກີນຄວາມສາມາດຂອງຕົນ ຜູ້ປະກອບວິຊາຊີບປິ່ນປົວ ມີສິດໃຫ້ການ ເຊີດຊູເບື້ອງຕົ້ນ ແລ້ວນຳສົ່ງຄົນເຈັບໄປໂຮງໝໍດ່ວນ ເພື່ອສືບຕໍ່ການປິ່ນປົວໃຫ້ທັນເວລາ.
7. ປະຕິບັດສິດອື່ນໆ ຕາມກົດໝາຍວ່າດ້ວຍການປິ່ນປົວ ວາງອອກ.

**ມາດຕາ 12. ໜ້າທີ່ຂອງຫ້ອງກວດພະຍາດເອກະຊົນ:**

1. ປະຕິບັດການເຊື່ອມຕໍ່ທາງດ້ານວິຊາການ ກັບ ລະບົບການບໍລິການປິ່ນປົວຂອງລັດ ແລະ ເອກະຊົນ ຢູ່ ຂົງເຂດທີ່ຫ້ອງກວດພະຍາດຕັ້ງຢູ່ ລວມທັງການຮ່ວມມື ລະຫວ່າງ ຜູ້ປະກອບວິຊາຊີບປິ່ນປົວທີ່ປະຈຳການຢູ່ສະຖານທີ່ບໍລິການຂອງລັດ ແລະ ເອກະຊົນ ເພື່ອບໍລິການຮ່ວມກັນ ເຊັ່ນ: ຫ້ອງກວດພະຍາດເອກະຊົນ ໃນໂຮງໝໍຂອງລັດ ຕາມມາດຕາ 22 ຂອງ ກົດໝາຍວ່າດ້ວຍການປິ່ນປົວ.
2. ບັນທຶກການປິ່ນປົວຄົນເຈັບແຕ່ລະວັນ ໃສ່ປຶ້ມບັນທຶກ, ຂຽນໃບສັ່ງກວດເພີ່ມຕ່າງໆ ແລະ ໃບສັ່ງຢາ ຢ່າງຈະແຈ້ງ, ຊັດເຈນ ແລະ ສາມາດອ່ານອອກໄດ້.
3. ລາຍງານຂໍ້ມູນສະຖິຕິ ການປິ່ນປົວທຸກໆເດືອນໃຫ້ຫ້ອງການສາທາລະນະສຸກເມືອງ ທີ່ຕົນຂຶ້ນກັບ ເພື່ອ ສົ່ງຕໍ່ ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ເປັນຜູ້ສັງລວມແລ້ວ ລາຍງານປະຈຳໄຕມາດ ແລະ ປີ ໃຫ້ ກົມປິ່ນປົວ ຢ່າງເປັນປົກກະຕິ, ເພື່ອລາຍງານ ການນຳ ກະຊວງສາທາລະນະສຸກ ຮັບຊາບ.
4. ໃຫ້ການຮ່ວມມືເປັນຢ່າງດີແກ່ຄະນະກວດກາໃນແຕ່ລະຂັ້ນ ເຊັ່ນ : ກະຊວງສາທາລະນະສຸກ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ຫ້ອງການສາທາລະນະສຸກເມືອງ ທີ່ລົງກວດກາທາງດ້ານວິຊາສະເພາະ ໂດຍອີງໃສ່ປຶ້ມຕິດຕາມການບັນທຶກປິ່ນປົວຄົນເຈັບ ທີ່ ກະຊວງສາທາລະນະສຸກ ອອກແບບໃຫ້ເປັນເອກະພາບ ໃນທົ່ວປະເທດ.
5. ໃນກໍລະນີມີຄົນເຈັບເສຍຊີວິດກະທັນຫັນຢູ່ຫ້ອງກວດພະຍາດຂອງຕົນ ຜູ້ທີ່ເປັນເຈົ້າຂອງຫ້ອງກວດພະຍາດ ຕ້ອງແຈ້ງໃຫ້ຫ້ອງການສາທາລະນະສຸກເມືອງ ທີ່ຕົນຂຶ້ນກັບ ເພື່ອເຮັດການກວດກາ ແລະ ຊອກຫາສາຍເຫດ ຂອງການເສຍຊີວິດ ພາຍໃນ 24 ຊົ່ວໂມງ ພ້ອມທັງລາຍງານໃຫ້ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ກົມປິ່ນປົວ ກະຊວງສາທາລະນະສຸກ ຊາບ.
6. ໃຫ້ຕິດລາຄາການບໍລິການໄວ້ຢູ່ໃນຫ້ອງກວດພະຍາດຂອງຕົນ ເພື່ອໃຫ້ຄົນເຈັບເຫັນ ແລະ ຮັບຮູ້.
7. ປະຕິບັດຕາມໜ້າທີ່ອື່ນໆ ຕາມກົດໝາຍວ່າດ້ວຍການປິ່ນປົວ ວາງອອກ.

**ມາດຕາ 13. ພັນທະຂອງຫ້ອງກວດພະຍາດເອກະຊົນ:**

1. ຕ້ອງດຳເນີນການບໍລິການດ້ານການປິ່ນປົວ ຕາມລະບຽບ ກົດໝາຍວ່າດ້ວຍການປິ່ນປົວ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປລາວ ທຸກປະການ.
2. ໃຫ້ການບໍລິການປິ່ນປົວ ໂດຍບໍ່ເສຍຄ່າ ແກ່ກໍລະນີສຸກເສີນກະທັນຫັນ ຂອງຄົນເຈັບທີ່ທຸກຍາກ ແລະ ລາຍໄດ້ນ້ອຍ.
3. ປະກອບສ່ວນໃນວຽກງານພັດທະນາແຜນນະໂຍບາຍ ແລະ ຍຸດທະສາດດ້ານການປິ່ນປົວ ຂອງ ລັດໃນແຕ່ລະໄລຍະ.
4. ລາຍງານຂໍ້ມູນການບໍລິການ, ສະຖິຕິພະຍາດ ແລະ ການແກ້ໄຂສະພາບລະບາດທີ່ເກີດຂຶ້ນ ສົ່ງໃຫ້ຫ້ອງການສາທາລະນະສຸກເມືອງ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ກົມປິ່ນປົວ ກະຊວງສາທາລະນະສຸກ.
5. ປະຕິບັດພັນທະອື່ນໆທີ່ກ່ຽວຂ້ອງ.

## ໝວດທີ 4
## ເງື່ອນໄຂ ແລະ ມາດຕະຖານຂອງຜູ້ມີສິດເປີດຫ້ອງກວດພະຍາດເອກະຊົນ

**ມາດຕາ 14. ເງື່ອນໄຂຂອງຜູ້ມີສິດເປີດຫ້ອງກວດພະຍາດເອກະຊົນ:**

ຜູ້ມີສິດເປີດຫ້ອງກວດພະຍາດເອກະຊົນ ຕ້ອງເປັນຄົນລາວ, ຖືສັນຊາດລາວ, ຮຽນຈົບວິຊາການແພດສາຂາໃດໜຶ່ງ ຂັ້ນປະລິນຍາຕີ ຂຶ້ນໄປ ຢູ່ ສປປລາວ ຫຼື ຕ່າງປະເທດ ທີ່ຮັບຮູ້ໂດຍ ກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາ, ມີປະກາສະນີຍະບັດດ້ານການແພດ, ມີປະສົບການດ້ານປິ່ນປົວມາກ່ອນ ຢ່າງໜ້ອຍ 10 ປີ ທີ່ໄດ້ເຮັດວຽກຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເປັນຜູ້ທີ່ໄດ້ຮັບໃບປະກອບວິຊາຊີບປິ່ນປົວ ທີ່ອອກໃຫ້ໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ ກະຊວງສາທາລະນະສຸກ ຂອງ ສປປລາວ.

**ມາດຕາ 15. ມາດຕະຖານຂອງຜູ້ມີສິດເປີດຫ້ອງກວດພະຍາດເອກະຊົນ:**

1. ຜູ້ມີສິດເປີດ ຫ້ອງກວດພະຍາດ ປະເພດ 24 ຊົ່ວໂມງ:
   ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ຂຶ້ນໄປ, ທີ່ໄດ້ຮັບບໍານານ ຫຼື ອອກສ້າງເສດຖະກິດຄອບຄົວ ທີ່ຖືກຕ້ອງຕາມລະບຽບການ ແຕ່ຕ້ອງເຄີຍປະຕິບັດວຽກງານປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.
2. ຜູ້ມີສິດເປີດຫ້ອງກວດພະຍາດ ປະເພດ ນອກໂມງລັດຖະການ:
   ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ຂຶ້ນໄປ, ທີ່ກໍາລັງປະຕິບັດງານດ້ານການປິ່ນປົວໃນສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ຍັງເປັນລັດຖະກອນປະຈໍາການຢູ່ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.
3. ຜູ້ມີສິດເປີດຫ້ອງກວດພະຍາດ ລັກສະນະທົ່ວໄປ:
   ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ຂຶ້ນໄປ ທີ່ກໍາລັງປະຕິບັດງານດ້ານການແພດປິ່ນປົວໃນສະຖານທີ່ບໍລິການປິ່ນປົວຂອງລັດ ທີ່ເປັນລັດຖະກອນປະຈໍາການຢູ່, ອອກສ້າງເສດຖະກິດຄອບຄົວ ຫຼື ອອກຮັບບໍານານ ຖືກຕ້ອງຕາມລະບຽບຫຼັກການ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.
4. ຜູ້ມີສິດເປີດຫ້ອງກວດພະຍາດ ລັກສະນະສະເພາະວິຊາ:
   ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ຂຶ້ນໄປ ທີ່ລົງເລິກຂະແໜງສະເພາະວິຊາສາຂາໃດໜຶ່ງ ເປັນຕົ້ນ: ວາງຢາສະລົບ, ຟື້ນຟູຊີບ ແລະ ການແພດສຸກເສີນ, ຫູຄໍດັງ, ຕາ, ຜິວໜັງ, ສຸຂະພາບຈິດ, ການແພດຟື້ນຟູໜ້າທີ່ການ/ນັກກາຍະພາບບໍາບັດ ແລະ ທັນຕະແພດ, ທີ່ເປັນລັດຖະກອນປະຈໍາການຢູ່, ອອກສ້າງເສດຖະກິດຄອບຄົວ ຫຼື ອອກຮັບບໍານານ ຖືກຕ້ອງຕາມລະບຽບຫຼັກການ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.
5. ຜູ້ມີສິດເປີດຫ້ອງກວດພະຍາດ ລັກສະນະການແພດພື້ນເມືອງ:
   ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ຂຶ້ນໄປ ທີ່ກໍາລັງປະຕິບັດວຽກງານດ້ານການແພດພື້ນເມືອງ ໃນສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ຍັງເປັນລັດຖະກອນປະຈໍາການຢູ່, ອອກສ້າງເສດຖະກິດຄອບຄົວ ຫຼື ອອກຮັບບໍານານ ຖືກຕ້ອງຕາມລະບຽບຫຼັກການ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ຫຼື ໝໍຢາພື້ນເມືອງ ທີ່ມີຊື່ສຽງຮັບຮູ້ ຈາກ ກະຊວງສາທາລະນະສຸກ.

6. ຜູ້ມີສິດເປີດ ຫ້ອງກວດພະຍາດ ຂັ້ນ 1:
ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວ ທີ່ເປັນທ່ານໝໍ ຂັ້ນຊ່ຽວຊານ ຂັ້ນ1 ຂຶ້ນໄປ ທີ່ກຳລັງປະຕິບັດງານດ້ານການປິ່ນປົວໃນສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ຍັງເປັນລັດຖະກອນປະຈຳການຢູ່, ອອກສ້າງເສດຖະກິດຄອບຄົວ ຫຼື ອອກຮັບບຳນານຖືກຕ້ອງຕາມລະບຽບຫຼັກການ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

7. ຜູ້ມີສິດເປີດ ຫ້ອງກວດພະຍາດ ຂັ້ນ 2:
ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວ ທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ຂຶ້ນໄປ ທີ່ກຳລັງປະຕິບັດງານດ້ານການແພດປິ່ນປົວໃນສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ຍັງເປັນລັດຖະກອນປະຈຳການຢູ່, ອອກສ້າງເສດຖະກິດຄອບຄົວ ຫຼື ອອກຮັບບຳນານ ຖືກຕ້ອງຕາມລະບຽບຫຼັກການ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

8. ຜູ້ມີສິດເປີດ ຫ້ອງກວດພະຍາດ ຂັ້ນ 3:
ອະນຸຍາດໃຫ້ແຕ່ຜູ້ທີ່ມີໃບປະກອບວິຊາຊີບປິ່ນປົວ ທີ່ເປັນທ່ານໝໍ ຂັ້ນປະລິນຍາຕີ ທີ່ກຳລັງປະຕິບັດງານດ້ານການແພດປິ່ນປົວໃນສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ຍັງເປັນລັດຖະກອນປະຈຳການຢູ່, ອອກສ້າງເສດຖະກິດຄອບຄົວ ຫຼື ອອກຮັບບຳນານ ຖືກຕ້ອງຕາມລະບຽບຫຼັກການ ແລະ ເປັນຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

**<u>ໝາຍເຫດ:</u>** ສຳລັບຜູ້ປະກອບວິຊາຊີບປິ່ນປົວ ທີ່ເປັນ ແພດຊ່ວຍ, ແພດຮສຂ-ຊັ້ນສູງ, ທັນຕະແພດຊ່ວຍ, ກາຍະພາບບຳບັດຊັ້ນກາງ ແລະ ຊັ້ນກາງອື່ນໆ, ຜ່ານມາຜູ້ກ່ຽວເຄີຍໄດ້ຮັບໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດ ທີ່ອອກໃຫ້ໂດຍ ກະຊວງສາທາລະນະສຸກ ຈະອະນຸຍາດໃຫ້ດຳເນີນກິດຈະການໄດ້ກໍ່ຕໍ່ເມື່ອ ຜູ້ກ່ຽວຕ້ອງໄປຕັ້ງຫ້ອງກວດພະຍາດເອກະຊົນ ຢູ່ ເຂດນອກເທດສະບານ ຂອງ ແຂວງ ແລະ ນະຄອນຫຼວງ ເທົ່ານັ້ນ.

**ມາດຕາ 16. ເອກະສານປະກອບຂໍເປີດຫ້ອງກວດພະຍາດເອກະຊົນ:**

ຜູ້ປະກອບວິຊາຊີບປິ່ນປົວ ທີ່ຂໍເປີດຫ້ອງກວດພະຍາດເອກະຊົນ ຈະຕ້ອງໄດ້ປະກອບເອກະສານ ຄົບຊຸດ ດັ່ງນີ້:

| | |
|---|---|
| 1. ໃບຄຳຮ້ອງຂຽນດ້ວຍຕົນເອງ(ຕົ້ນສະບັບຕາມແບບພິມຂອງກົມປິ່ນປົວ) | 1 ສະບັບ |
| 2. ຊີວະປະຫວັດຫຍໍ້ | 1 ສະບັບ |
| 3. ໃບປະກາສະນີຍະບັດ | 1 ສະບັບ |
| 4. ໃບຢັ້ງຢືນວິຊາຊີບປິ່ນປົວ(ອອກໃຫ້ໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ) | 1 ສະບັບ |
| 5. ໃບຢັ້ງຢືນທີ່ຢູ່ | 1 ສະບັບ |
| 6. ສຳເນົາບັດປະຈຳຕົວ | 1 ສະບັບ |
| 7. ໃບຢັ້ງຢືນບ່ອນປະຈຳການ, ບຳນານ ຫຼື ໃບອອກສ້າງເສດຖະກິດຄອບຄົວ | 1 ສະບັບ |
| 8. ໃບຢັ້ງຢືນທີ່ຕັ້ງຂອງຫ້ອງກວດພະຍາດ | 1 ສະບັບ |
| 9. ແຜນທີ່ຕັ້ງຫ້ອງກວດພະຍາດ | 1 ສະບັບ |
| 10. ແຜນວາດການບໍລິການຂອງຫ້ອງກວດພະຍາດ | 1 ສະບັບ |
| 11. ບັນຊີອຸປະກອນການແພດ | 1 ສະບັບ |
| 12. ໃບຢັ້ງຢືນສຸຂະພາບ(ບໍ່ເກີນ 03 ເດືອນ) | 1 ສະບັບ |
| 13. ໃບແຈ້ງໂທດ(ບໍ່ເກີນ 03 ເດືອນ) | 1 ສະບັບ |
| 14. ລາຍຊື່ຜູ້ຊ່ວຍພ້ອມຊີວະປະຫວັດ(ເປັນຜູ້ທີ່ໄດ້ຮັບໃບວິຊາຊີບປິ່ນປົວ)ຜູ້ລະ | 1 ສະບັບ |
| 15. ຮູບເຄິ່ງຄີງ ຂະໜາດ 3X4 | 3 ແຜ່ນ. |

# ໝວດທີ 5

## ການອະນຸມັດ ແລະ ການຂຶ້ນທະບຽນ

**ມາດຕາ 17. ການສະເໜີຂໍສ້າງຕັ້ງ ຫ້ອງກວດພະຍາດເອກະຊົນ:**

ຜູ້ທີ່ມີຈຸດປະສົງສະເໜີຂໍເປີດຫ້ອງກວດພະຍາດເອກະຊົນ ຕ້ອງຍື່ນເອກະສານ ຄົບຊຸດ ຕາມ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້, ຍື່ນຜ່ານ ຫ້ອງການສາທາລະນະສຸກເມືອງ, ພະແນກສາທາລະນະສຸກແຂວງ ຫຼື ນະຄອນຫຼວງ ເພື່ອເຊັນຢັ້ງຢືນ ແລະ ສົ່ງໃຫ້ ກົມປິ່ນປົວ ກະຊວງສາທາລະນະສຸກ ເປັນຜູ້ຄົ້ນຄ້ວາ ແລະ ພິຈາລະນາ ສະເໜີຂໍການອະນຸມັດ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ນຳ ລັດຖະມົນຕີ ກະຊວງສາທາລະນະສຸກ ເຊັນອອກໃບອະນຸຍາດ ເປັນທາງການ.

**ມາດຕາ 18. ການສະເໜີຂໍຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ:**

ຜູ້ທີ່ຈະຂໍຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ ຕ້ອງໄດ້ປະກອບເອກະສານໃຫ້ຄົບຊຸດ, ສະເໜີຂໍຕໍ່ນຳ ກົມປິ່ນປົວ ກະຊວງສາທາລະນະສຸກ ທີ່ເປັນອົງການຄຸ້ມຄອງຫ້ອງກວດພະຍາດເອກະຊົນ ດັ່ງນີ້ :

1. ໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ(ຕົ້ນສະບັບ) 1 ສະບັບ
2. ໃບຄຳຮ້ອງຂຽນດ້ວຍຕົນເອງ(ຕາມແບບພິມຂອງກົມປິ່ນປົວ) 1 ສະບັບ
3. ໃບຢັ້ງຢືນທີ່ຕັ້ງຂອງຫ້ອງກວດພະຍາດ 1 ສະບັບ
4. ແຜນທີ່ຕັ້ງຫ້ອງກວດພະຍາດ 1 ສະບັບ
5. ແຜນວາດການບໍລິການຂອງຫ້ອງກວດພະຍາດ 1 ສະບັບ
6. ແຈ້ງບັນຊີອຸປະກອນການແພດ 1 ສະບັບ
7. ໃບຢັ້ງຢືນສຸຂະພາບ(ບໍ່ເກີນ 03 ເດືອນ) 1 ສະບັບ

**ມາດຕາ 19. ການຂໍຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ:**

ການຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດ ຕ້ອງໄດ້ປະກອບເອກະສານໃຫ້ຄົບຊຸດ ຕາມ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້, ຍື່ນຜ່ານ ຫ້ອງການສາທາລະນະສຸກເມືອງ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ກົມປິ່ນປົວ ກະຊວງສາທາລະນະສຸກ ກ່ອນ 03 ເດືອນ ໃບອະນຸຍາດເກົ່າຈະໝົດອາຍຸ, ຖ້າຜູ້ກ່ຽວບໍ່ປະກອບເອກະສານຂໍຕໍ່ຖືວ່າຜູ້ກ່ຽວຈະບໍ່ດຳເນີນກິດຈະການ ແລະ ໃບອະນຸຍາດດັ່ງກ່າວກໍ່ຖືວ່າໃຊ້ງານບໍ່ໄດ້ຕາມລະບຽບການ.

**ມາດຕາ 20. ການອະນຸມັດຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ:**

ການຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ໃຫ້ປະຕິບັດ ດັ່ງນີ້ :

1. ຂັ້ນ 1, ຂັ້ນ 2 ແມ່ນ ລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຜູ້ເຊັນຕໍ່ອາຍຸໃບອະນຸຍາດ ເປັນທາງການ.
2. ຂັ້ນ 3 ແມ່ນ ຫົວໜ້າກົມປິ່ນປົວ ກະຊວງສາທາລະນະສຸກ ເປັນຜູ້ເຊັນຕໍ່ອາຍຸໃບອະນຸຍາດ ເປັນທາງການ.

**ມາດຕາ 21. ການຂຶ້ນທະບຽນ:**

ອະນຸຍາດໃຫ້ແຕ່ຜູ້ທີ່ໄດ້ຮັບ ໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ ຈາກ ກະຊວງສາທາລະນະສຸກ ເທົ່ານັ້ນ ຂຶ້ນທະບຽນອາກອນ ນຳ ຂະແໜງການເງິນເມືອງ ບ່ອນທີ່ຫ້ອງກວດພະຍາດຂອງຕົນຕັ້ງຢູ່.

**ມາດຕາ 22. ການເສັຍຄ່າທຳນຽມ:**

ເຈົ້າຂອງຫ້ອງກວດພະຍາດເອກະຊົນ ຕ້ອງໄດ້ເສັຍຄ່າທຳນຽມ, ຄ່າເອກະສານຕ່າງໆເຊັ່ນ : ໃບຄຳຮ້ອງຂໍສ້າງຕັ້ງຫ້ອງກວດພະຍາດ ແລະ ໃບຄຳຮ້ອງຂໍຕໍ່ຫ້ອງກວດພະຍາດ, ໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດ ແລະ ໃບອະນຸຍາດຕໍ່ອາຍຸຫ້ອງກວດພະຍາດ ໃຫ້ ກົມປິ່ນປົວ ກະຊວງສາທາລະນະສຸກ ຕາມລະດັບຂັ້ນ ຂອງ ຫ້ອງກວດພະຍາດ ແລະ ຕາມລະບຽບການ.

**ມາດຕາ 23. ອາຍຸໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ:**

ໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ ມີກຳນົດໄຊ້ໄດ້ເປັນເວລາ 02 ປີ ແລະ ຈະຕໍ່ອາຍຸໃຫ້ແຕ່ຜູ້ທີ່ເຄື່ອນໄຫວຖືກຕ້ອງເທົ່ານັ້ນ. ໃນກໍລະນີ ຂໍຢຸດເຊົາຊົ່ວຄາວ ຫຼື ຂໍຢຸດເຊົາຖາວອນ ເຈົ້າຂອງຫ້ອງກວດພະຍາດ ຕ້ອງໄດ້ແຈ້ງໃຫ້ ຫ້ອງການສາທາລະນະສຸກເມືອງ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ກົມປິ່ນປົວ ກະຊວງສາທາລະສຸກ ຮັບຮູ້ກ່ອນລ່ວງໜ້າ 30 ວັນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 24. ປະເພດຂໍ້ຫ້າມ:**

1. ຫ້າມຫ້ອງກວດພະຍາດເອກະຊົນ ຕິດຕາມຄົນເຈັບ ເກີນ 12 ຊົ່ວໂມງ.
2. ຫ້າມຕັ້ງຮ້ານຂາຍຢາໃນສະຖານທີ່ດຽວກັບຫ້ອງກວດພະຍາດເອກະຊົນ, ອະນຸຍາດໃຫ້ນຳໃຊ້ແຕ່ຢາຈຳເປັນພື້ນຖານ ຫຼື ຢາຂະແໜງຊ່ຽວຊານສະເພາະ ທີ່ຈຳເປັນໃນການປິ່ນປົວ.
3. ຫ້າມຂູດມົດລູກ, ເຮັດໝັນ ຢູ່ ຫ້ອງກວດພະຍາດເອກະຊົນ ໂດຍບໍ່ໄດ້ຮັບອະນຸຍາດ ລວມທັງ ການນຳໃຊ້ເຕັກນິກປິ່ນປົວທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນເຈັບ.
4. ຫ້າມບໍລິການວາງແຜນຄອບຄົວ ຢູ່ ຫ້ອງກວດພະຍາດເອກະຊົນ, ຍົກເວັ້ນຜູ້ທີ່ໄດ້ຜ່ານການອົບຮົມ ແລະ ມີໃບຢັ້ງຢືນ ອະນຸຍາດ ຈາກ ກະຊວງສາທາລະນະສຸກ ເທົ່ານັ້ນ.
5. ຫ້າມໂຄສະນາທຸກຮູບການຕ່າງໆ ເພື່ອຊັກຊວນໃຫ້ຄົນເຈັບ ມາ ປິ່ນປົວນຳຕົນ.
6. ຫ້າມຕົບແຕ່ງສະຖານທີ່ປິ່ນປົວ ແລະ ຈັດວາງປ້າຍໂຄສະນາ ທີ່ມີ ລັກສະນະການຄ້າ.
7. ຫ້າມຂຽນບົດລາຍງານ, ອອກໃບຢັ້ງຢືນການປິ່ນປົວ ໂດຍມີການສົມຮູ້ຮ່ວມຄິດກັບຄົນເຈັບ ຫຼື ຄົນອື່ນທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ.
8. ຫ້າມສ້າງຕັ້ງຫ້ອງກວດພະຍາດເອກະຊົນ ຢູ່ ສູນການຄ້າ, ຕະຫຼາດ, ຮ້ານຂາຍຢາ ແລະ ສະຖານທີ່ອື່ນໆທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.
9. ຫ້າມບໍ່ໃຫ້ດັດແປງຈາກຮູບເດີມຂອງຢາ ເຊັ່ນ : ຫ້າມບົດເມັດຢາ, ແກະຢາໃສ່ຊອງໃໝ່ ແລະ ອື່ນໆໃນເວລາຈ່າຍຢາໃຫ້ຄົນເຈັບ.
10. ຫ້າມເອົາໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນຂອງຕົນເອງໃຫ້ຄົນອື່ນເຊົ່າ, ຮ່ວມທຶນ, ຮ່ວມວິຊາການ ແລະ ອື່ນໆ ຢ່າງເດັດຂາດ. ຫຼື ໃນກໍລະນີເຈົ້າຂອງຫ້ອງກວດພະຍາດເສັຍຊີວິດ, ຕິດຂັດວຽກງານ ບຸກຄົນອື່ນ ບໍ່ມີສິດນຳໃຊ້ຫ້ອງກວດພະຍາດດັ່ງກ່າວ.

**<u>ໝາຍເຫດ</u>:** ຖ້າບຸກຄົນໃດຫາກມີການລະເມີດ ໜຶ່ງ ໃນ ສິບ ຂໍ້ຫ້າມທີ່ກ່າວມາຂ້າງເທິງນີ້ ຫຼື ເກີດມີບັນຫາການຮ້ອງຟ້ອງຂອງຄົນເຈັບ ແລະ ໄດ້ຮັບການຢັ້ງຢືນການກະທຳຜິດ ຈາກ ສະພາຄຸ້ມຄອງວິຊາຊີບປິ່ນປົວ ກະຊວງສາທາລະນະສຸກ ຈະບໍ່ຕໍ່ໃບອະນຸຍາດສ້າງຕັ້ງຫ້ອງກວດພະຍາດເອກະຊົນ ໃຫ້ຜູ້ກ່ຽວ ຢ່າງເດັດຂາດ.

## ໝວດທີ 7
## ການຄຸ້ມຄອງ ແລະກວດກາ

**ມາດຕາ 25. ອົງການຄຸ້ມຄອງ ແລະ ກວດກາ:**

ການຄຸ້ມຄອງກວດກາທາງດ້ານວິຊາສະເພາະ ຂອງ ຫ້ອງກວດພະຍາດເອກະຊົນ ທຸກປະເພດ, ທຸກລັກສະນະ ແລະ ທຸກຂັ້ນ ໃນຂອບເຂດທົ່ວປະເທດ ຕ້ອງມີການປະສານສົມທົບກັນໃນແຕ່ລະຂັ້ນ ດັ່ງນີ້ :

1. ຂັ້ນສູນກາງ ແມ່ນ ກົມປິ່ນປົວ ກະຊວງສາທາລະນະສຸກ.
2. ຂັ້ນແຂວງ ແມ່ນ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ.
3. ຂັ້ນເມືອງ ແມ່ນ ຫ້ອງການສາທາລະນະສຸກເມືອງ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງ ອົງການຄຸ້ມຄອງ ແລະ ກວດກາ:**

1. ອົງການຄຸ້ມຄອງ ແລະ ກວດກາ ຫ້ອງກວດພະຍາດເອກະຊົນ ແຕ່ລະຂັ້ນ ມີໜ້າທີ່ເຮັດວຽກຮ່ວມກັນໃນການວາງແຜນການລົງຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການບໍລິການປິ່ນປົວຂອງຫ້ອງກວດພະຍາດ ເປັນປົກກະຕິ 01 ຄັ້ງຕໍ່ປີ ໂດຍແຈ້ງໃຫ້ຮູ້ລ່ວງໜ້າກ່ອນ 01 ອາທິດ.
2. ກໍລະນີມີບັນຫາຮ້ອງຟ້ອງ ສາມາດລົງກວດກາດ່ວນ ໂດຍບໍ່ຕ້ອງແຈ້ງໃຫ້ຮູ້ລ່ວງໜ້າ ແລະ ການກວດກາຕ້ອງປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງທຸກຄັ້ງ ຢ່າງຖືກຕ້ອງ ຕາມລະບຽບຫຼັກການ.

**ມາດຕາ 27. ເຄື່ອງມືໃນການຄຸ້ມຄອງ ແລະ ກວດກາ:**

ການຄຸ້ມຄອງ ແລະ ກວດກາ ຕ້ອງອີງໃສ່ ເຄື່ອງມື ແລະ ແບບຟອມ ຂອງ ກົມປິ່ນປົວ ກະຊວງສາທາລະນະສຸກວາງອອກ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28. ນະໂຍບາຍຕໍ່ຜູ້ມີຜົນງານ**

ຫ້ອງກວດພະຍາດເອກະຊົນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມ ຄວາມເໝາະສົມ ແລະ ຕາມລະບຽບຫຼັກການ ຂອງ ກະຊວງສາທາລະນະສຸກ.

**ມາດຕາ 29. ມາດຕະການຕໍ່ຜູ້ລະເມີດ:**

ຫ້ອງກວດພະຍາດເອກະຊົນ ຜູ້ທີ່ໄດ້ລະເມີດ ຕໍ່ ຂໍ້ຕົກລົງສະບັບນີ້ ຈະມີມາດຕະການ ດັ່ງນີ້:

- ຄັ້ງທີ 1. ໃຫ້ການແນະນໍາ ແລະ ຂຽນບົດບັນທຶກຮ່ວມກັນ.
- ຄັ້ງທີ 2. ໃຫ້ການຕັກເຕືອນ ແລະ ຂຽນບົດບັນທຶກຮ່ວມກັນ, ຖ້າບໍ່ມີການປ່ຽນແປງ 01 ເດືອນ
- ຄັ້ງທີ 3. ຂຽນບົດບັນທຶກຮ່ວມກັນ ແລະ ປັບໃໝຕາມເງື່ອນໄຂ.
- ຄັ້ງທີ 4. ປັບໃໝ 2 ເທົ່າຂອງຄັ້ງທີ 3 ແລະ ສັ່ງປິດກິດຈະການ.

ການກະທໍາຜິດໃນກໍລະນີໃດກໍ່ຕາມ ທີ່ເຮັດໃຫ້ຄົນເຈັບເສຍອົງຄະ ຫຼື ເສຍຊີວິດ ຈະໄດ້ຖືກດໍາເນີນຄະດີ ຕາມກົດໝາຍ ແລະ ໃຫ້ຢຸດການເຄື່ອນໄຫວຈົນກ່ວາສານຈະຕັດສິນ, ຖ້າມີຄວາມຜິດແທ້ແມ່ນຈະຖືກ ປິດກິດຈະການຖາວອນ ຕະຫຼອດໄປ.

# ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 30. ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປິ່ນປົວ ກະຊວງສາທາລະນະສຸກ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ຫ້ອງການສາທາລະນະສຸກເມືອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງຢ່າງທົ່ວເຖິງ ແລະ ເຂັ້ມງວດ.

**ມາດຕາ 31. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຂໍ້ກຳນົດ ແລະ ກົດລະບຽບອື່ນທີ່ກະຊວງສາທາລະນະສຸກ ໄດ້ປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ກະຊວງ ສາທາລະນະສຸກ
ລັດຖະມົນຕີ

ຮສ ດຣ. ບຸນກອງ ສີຫາວົງ